# ຊົມເຊີຍຜົນສຳເລັດ
# ກອງປະຊຸມເຜີຍແຜ່ວຽກງານຂອງກອງທຶນສົ່ງເສີມ
# ວິສາຫະກິດຂະໜາດນ້ອຍ ແລະ ກາງ

ວັນທີ 04/04/2023 ທີ່ຜ່ານມາຢູ່ທີ່ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຈັດກອງປະຊຸມປະຈຳປີ 2022 ຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍການເປັນປະທານ ຂອງ ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳ ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ແມ່ນເພື່ອທົບທວນຄືນຜົນການຈັດຕັ້ງປະຕິບັດວຽກງານຂອງ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ) ປະຈຳປີ 2022 ແລະ ກຳນົດແຜນວຽກຈຸດສູມໃນປີ 2023, ເຊິ່ງໄດ້ມີຕາງໜ້າຈາກ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ ຈຸນລະວິສາຫະກິດເຂົ້າຮ່ວມ, ພ້ອມກັນນັ້ນກໍ່ຍັງໄດ້ຂຶ້ນແລກປ່ຽນຂໍ້ຄິດເຫັນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການສະໜອງທຶນ ແລະ ເຂົ້າຫາແຫຼ່ງທຶນຕ່າງໆຂອງ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ)



ໃນວັນທີ 06-07 ເມສາ 2023 ທີ່ຫ້ອງປະຊຸມສູນການຮ່ວມມືສາກົນ ແລະ ການຝຶກອົບຮົມ, BCEL ກໍໄດ້ເຂົ້າຮ່ວມຕັ້ງບູ໊ທທີ່ງານວາງສະແດງຜະລິດຕະພັນສິນຄ້າໃນກອງປະຊຸມປະຈຳປີ 2022 ຂອງຂະແໜງອຸດສາຫະກຳການຄ້າ ໃຫ້ກຽດເຂົ້າຮ່ວມງານ ແລະ ເຂົ້າຢ້ຽມຊົມບູ໊ທຂອງ BCEL ໂດຍ ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ, ພ້ອມດ້ວຍບັນດາຄະນະກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ, ເຊິ່ງພາຍໃນບູ໊ທໄດ້ໃຫ້ຄຳແນະນຳກ່ຽວກັບເງິນກູ້ເພື່ອສົ່ງເສີມທຸລະກິດ SME ໃນອັດຕາດອກເບ້ຍ 3%/ຕໍ່ປີ ເຊິ່ງໄດ້ຮັບຄວາມສົນໃຈຈາກຜູ້ເຂົ້າຮ່ວມງານເປັນຈຳນວນຫຼາຍ.




*ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ສປປ ລາວ ເຂົ້າຢ້ຽມຊົມບູ໊ທຂອງ BCEL*

BCEL ເປັນໜຶ່ງໃນສະມາຊິກຂອງ ທສວ ທີ່ໄດ້ຮັບແຫຼ່ງທຶນເງິນກູ້ ຈາກລັດຖະບານ ສ ປປ ລາວ, ໃນໄລຍະຜ່ານມາ BCEL ໄດ້ປະຕິບັດໜ້າທີ່ສະໜອງທຶນໃຫ້ກັບຫົວໜ່ວຍທຸລະກິດ ໂດຍການອະນຸມັດທຶນໃນບ້ວງຂອງ ທສວ ຈຳນວນໜຶ່ງແລ້ວ ແລະ ຢູ່ໃນຂັ້ນຕອນການຄົ້ນຄວ້າພິຈາລະນາອີກຈຳນວນໜຶ່ງ, ເປົ້າໝາຍແມ່ນເພື່ອປ່ອຍກູ້ໃຫ້ຫົວໜ່ວຍທຸລະກິດ ສົ່ງເສີມ SME ໃນອັດຕາດອກເບ້ຍ 3% ຕໍ່ປີ ເຊິ່ງເໝາະກັບບັນດາຫົວໜ່ວຍທຸລະກິດ ຂະແໜງອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ, ຂະແໜງຫັດຖະກຳ, ຂະແໜງກະສິກຳ ປູກຝັງ-ລ້ຽງສັດ, ຂະແໜງການທ່ອງທ່ຽວ, ຫາກທ່ານໃດມີຄວາມສົນໃຈນຳໃຊ້ທຶນເພື່ອຂະແໜງການທີ່ກ່າວມານັ້ນ ແມ່ນສາມາດເຂົ້າມາພົວພັນກັບພວກເຮົາໄດ້ ເຊິ່ງພວກເຮົາອຳນວຍຄວາມສະດວກໃຫ້ທ່ານດ້ວຍຕາໜ່າງການໃຫ້ບໍລິການທຸກສາຂາທົ່ວປະເທດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ